**ມິຊຊາອາທິດທີ 25 ການົດທຳມະດາປີ**

**ວັນທີ 18 ກັນຍາ 2022**



**ພຣະວໍລະສານໂດຍນັກບຸນລູກາ 16, 1-13**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວຄວາມປຽບທຽບໃຫ້ພວກລູກສິດຟັງວ່າ: ເສດຖີຜູ້ໜຶ່ງມີຜູ້ຈັດການ ແລະ ຜູ້ຈັດການນີ້ຖືກຟ້ອງຫາວ່າໄດ້ຜານຊັບຂອງເພິ່ນ. ເສດຖີຜູ້ນັ້ນເລີຍຮຽກຜູ້ຈັດການນີ້ມາເວົ້າວ່າ: ເຮົາຄືໄດ້ຍິນເຂົາເວົ້າຫຍັງໃຫ້ເຈົ້າ, ແມ່ນບໍ? ເຈົ້າຈົ່ງລາຍງານມາໃຫ້ເຮົາຟັງ ຍ້ອນວ່າເຈົ້າຈະບໍ່ໄດ້ເປັນຜູ້ຈັດການຂອງເຮົາອີກຕໍ່ໄປ.

ຜູ້ຈັດການເລີຍຄິດໃນໃຈວ່າ: ຈະເຮັດແນວໃດດີ, ຍ້ອນວ່ານາຍຈະປົດອອກຈາກໜ້າທີ່ແລ້ວ? ຈະໄປຂຸດດິນບໍ? ບໍ່ມີແຮງພໍ. ໄປຂໍທານບໍ? ກໍອາຍເຂົາ. ໂອ! ຄິດອອກແລ້ວ, ຮູ້ຈັກວິທີເຮັດໃຫ້ຄົນອື່ນຮັບໂຕໄວ້ຢູ່ນຳເມື່ອເວລາຈະຖືກປົດຈາກຕຳແໜ່ງເປັນຜູ້ຈັດການ. ດັ່ງນີ້ເຂົາເລີຍຮຽກພວກຕິດໜີ້ນາຍມາເທື່ອລະຄົນ.

ເຂົາເວົ້າກັບຜູ້ທີໜຶ່ງວ່າ: ເຈົ້າຕິດໜີ້ນາຍເຮົາເທົ່າໃດ? ຜູ້ນັ້ນຕອບ: ຕິດໜີ້ນ້ຳມັນຮ້ອຍກະຖັງ. ຜູ້ຈັດການບອກວ່າ: ເອົາບັນຊີຂອງເຈົ້າອອກມາ, ນັ່ງລົງແລະຂຽນໃສ່ວ່າ: ຫ້າສິບກະຖັງເສຍໄວໆ. ຕໍ່ມາຜູ້ຈັດການກໍຖາມຄົນທີສອງ: ເຈົ້າຕິດໜີ້ນາຍເຮົາເທົ່າໃດ? ລາວຕອບວ່າ: ຕິດໜີ້ເຂົ້າຮ້ອຍໝື່ນ. ຈົ່ງເອົາບັນຊີອອກມາແລ້ວຂຽນວ່າ: ແປດສິບເສຍ.

ເສດຖີຜູ້ເຈົ້າຂອງກໍຍ້ອງຜູ້ຈັດການໃຈຄົດວ່າ: ເປັນຄົນສະຫລຽວສະຫລາດ. ຍ້ອນວ່າບຸດຂອງໂລກຫລັກແຫລມໃນວຽກການຂອງຕົນກວ່າບຸດແຫ່ງຄວາມສະວ່າງ. ດັ່ງນີ້, ເຮົາບອກພວກເຈົ້າວ່າ: ຈົ່ງເອົາຊັບສົມບັດອັນເຄີຍພາໄປທາງບາບນັ້ນມາໃຊ້ຊອກຫາມິດສະຫາຍ, ຜູ້ຈະຕ້ອນຮັບພວກເຈົ້າເຂົ້າໃນພຳນັກນິລັນດອນເມື່ອເວລາພວກເຈົ້າຈະໝົດເນື້ອປະດາຕົວ.

ຜູ້ທີ່ຊື່ສັດໃນເລື່ອງເລັກນ້ອຍ ກໍຈະຊື່ສັດໃນເລື່ອງໃຫຍ່ດ້ວຍ. ແລະຜູ້ທີ່ບໍ່ສັດຊື່ໃນເລື່ອງເລັກນ້ອຍ ກໍຈະບໍ່ຊື່ສັດໃນເລື່ອງໃຫຍ່ເຊັ່ນດຽວກັນ. ດັ່ງນັ້ນຖ້າທ່ານບໍ່ຊື່ສັດໃນການໃຊ້ຈ່າຍເງິນທອງຂອງໂລກນີ້ແລ້ວ, ແມ່ນໃຜຈະວາງໃຈມອບຊັບອັນແທ້ຈິງໃຫ້ແກ່ທ່ານ? ແລະຖ້າທ່ານບໍ່ສຸດຈະລິດຕໍ່ຊັບຂອງຜູ້ອື່ນແລ້ວ, ໃຜຈະກ້າມອບຊັບທີ່ເປັນຂອງທ່ານເອງໃຫ້ແກ່ທ່ານໄດ້? ບໍ່ມີຄົນໃຊ້ຄົນໃດຮັບໃຊ້ນາຍສອງຄົນໄດ້. ຍ້ອນເຂົາຈະຊັງນາຍໜຶ່ງແລະຮັກອີກນາຍໜຶ່ງ. ທ່ານບໍ່ສາມາດຮັບໃຊ້ພຣະເຈົ້າແລະເງິນພ້ອມກັນໄດ້.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດທີ່ຜ່ານມາ, ພວກເຮົາໄດ້ຟັງວາຈາພຣະເຈົ້າທີ່ກ່າວເຖິງຄວາມປຽບທຽບລູກລ້າງຜານຊຶ່ງໄດ້ໃຊ້ຈ່າຍຜານຊັບສິນເງິນຄຳຂອງຕົນຈົນໝົດກ້ຽງຢູ່ຕ່າງແດນ. ແຕ່ໃນທີ່ສຸດເຂົາກໍສຳນຶກໄດ້ແລະກັບຄືນມາຂໍໂທດນຳພໍ່ຂອງເຂົາ.

ສ່ວນພຣະວໍລະສານວັນອາທິດນີ້ກ່າວເຖິງຜູ້ຈັດການຂອງເສດຖີຜູ້ໜຶ່ງທີ່ໃຊ້ຊັບສິນເງິນຄຳອັນທຸດຈະລິດຂອງນາຍ ເພື່ອຍົກໜີ້ສິນໃຫ້ຜູ້ຕິດໜີ້ນາຍຂອງຕົນ. ການຮູ້ຈັກຜ່ອນໜັກຜ່ອນເບົາໃຫ້ກັນແລະກັນນີ້ເປັນການກະທຳຂອງບຸດແຫ່ງຄວາມສະວ່າງ. ຫລືເວົ້າອີກຢ່າງ, ການຮູ້ຈັກໃຫ້ອະໄພແກ່ກັນແລະກັນນັ້ນແມ່ນການກະທຳຂອງຜູ້ເປັນລູກພຣະເຈົ້າ. ຍ້ອນວ່າ, ຖ້າພວກເຮົາປາດຖະໜາໃຫ້ພຣະເຈົ້າອະໄພຖຸທດໃຫ້ພວກເຮົາ, ພວກເຮົາຕ້ອງຮູ້ຈັກໃຫ້ອະໄພແກ່ຄົນອື່ນເຊັ່ນດຽວກັນ. ດັ່ງທີ່ຜູ້ຈັດການໃນຄວາມປຽບທຽບວັນນີ້ກະທຳຕໍ່ຄົນອື່ນ. ເພາະເຂົາຄິດວ່າຖ້າວັນໜຶ່ງ, ເມື່ອເຂົາບໍ່ມີບ່ອນເພິ່ງອີງແລ້ວ, ຄົນອື່ນກໍຈະຕ້ອນຮັບເຂົາແລະຊ່ວຍເຫລືອເຂົາ.

ຖ້າເບິ່ງພາຍນອກແລ້ວ, ການກະທຳຂອງຄົນໃຊ້ຜູ້ນີ້ແມ່ນບໍ່ຖືກຕ້ອງ. ເພາະເຂົາໃຊ້ຈ່າຍຊັບຂອງນາຍຂອງເຂົາໂດຍບໍ່ໄດ້ຮັບອະນຸຍາດກ່ອນ. ແຕ່ຖ້າພວກເຮົາເບິ່ງເລິກລົງໄປແລ້ວກໍຈະເຫັນວ່າ ສິ່ງສຳຄັນທີ່ຄົນໃຊ້ຜູ້ນີ້ກຳລັງກະທຳນັ້ນຄືການຮູ້ຈັກໃຫ້ອະໄພແກ່ຄົນອື່ນ. ເມື່ອນາຍເຂົາໄດ້ຍິນຂ່າວນີ້ກໍໄດ້ຍ້ອງເຂົາວ່າເປັນຄົນໃຊ້ຜູ້ສະຫລາດ. ແລະຄວາມສະຫລາດນີ້ແມ່ນມາຈາກພຣະເຈົ້າ, ຜູ້ເປັນອົງແຫ່ງຄວາມສະວ່າງ. ດ້ວຍເຫດນີ້, ການກະທຳຂອງຄົນໃຊ້ຜູ້ນີ້ຈຶ່ງແມ່ນການກະທຳຂອງບຸດແຫ່ງຄວາມສະວ່າງ.

ສ່ວນພວກເຮົາເດ, ພວກເຮົາໄດ້ຮູ້ຈັກໃຫ້ອະໄພແກ່ຄົນອື່ນບໍ? ພວກເຮົາຮູ້ຈັກໝູນໃຊ້ສິ່ງຂອງຢູ່ໃນໂລກນີ້ເພື່ອແລກເອົາອານາຈັກສະຫວັນບໍ? ພວກເຮົາຮູ້ຈັກຄິດຫາຊີວິດພາຍໜ້າບໍ, ຫລືພວກເຮົາມົວເມົາແຕ່ນຳຊີວິດນີ້ຈົນລືມຊີວິດນິລັນດອນ? ພວກເຮົາໄດ້ໃຊ້ຊີວິດດັ່ງລູກຂອງຄວາມສະວ່າງ, ໝາຍວ່າລູກຂອງພຣະເຈົ້າ, ຫລືພວກເຮົາໃຊ້ຊີວິດດັ່ງລູກຂອງຄວາມມືດ, ຂອງຜີປີສາດ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກຜ່ອນຜັນໃຫ້ກັນແລະກັນ, ບໍ່ອິດສາບັງບຽດແລະບໍ່ໂມໂຫໂກດຮ້າຍ, ແຕ່ໃຫ້ມີໃຈເອື້ອເຟື້ອເພື່ອແຜ່ແລະຮູ້ຈັກໃຫ້ອະໄພເຊິ່ງກັນແລະກັນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ